ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 003 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 5 ມັງກອນ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍລະບົບການຊຳລະ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 103/ສພຊ, ລົງວັນທີ 20 ພະຈິກ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍລະບົບການຊຳລະ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 33/ຄປຈ, ລົງວັນທີ 20 ທັນວາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍລະບົບການຊຳລະ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 103 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 11 / 23

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍລະບົບການຊໍາລະ
## (ສະບັບປັບປຸງ)

- ອີງຕາມລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມຄັ້ງວັນທີ 10 ພະຈິກ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 20 ພະຈິກ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກ ສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ　　　　　　　　　　　　　　　　　　　　　ເລກທີ 45 /ສພຊ
　　　　　　　　　　　　　　　　　　　　　ນະຄອນຫຼວງວຽງຈັນ, ວັນທີ 20 ພະຈິກ 2023

# ກົດໝາຍ
# ວ່າດ້ວຍລະບົບການຊໍາລະ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານລະບົບການຊໍາລະ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ເຄື່ອນໄຫວຖືກຕ້ອງ, ມີຄວາມສະດວກ, ວ່ອງໄວ, ປອດໄພ, ໂປ່ງໃສ, ທັນສະໄໝ ແລະ ມີປະສິດທິພາບ ແນໃສ່ຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ, ຮັບປະກັນ ການສົ່ງເສີມການຄ້າ, ການບໍລິການ, ການລົງທຶນ, ການເຂົ້າເຖິງການບໍລິການທາງດ້ານການເງິນ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ລະບົບການຊໍາລະ**

ລະບົບການຊໍາລະ ແມ່ນ ການເຄື່ອນໄຫວທັງໝົດ ກ່ຽວກັບການຊໍາລະ ດ້ວຍການນໍາໃຊ້ເຄື່ອງມື, ຊ່ອງທາງ ແລະ ກົນໄກ ການຊໍາລະ ຂອງຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະເງິນ.

**ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຊໍາລະ** ໝາຍເຖິງ ການຈ່າຍ ແລະ ຮັບ ຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ ຫຼື ພັນທະອື່ນ ດ້ວຍການນໍາໃຊ້ເຄື່ອງມື, ຊ່ອງທາງ ແລະ ກົນໄກ ການຊໍາລະ ທີ່ຖືກຕ້ອງຕາມກົດໝາຍ;
2. **ການໂອນເງິນ** ໝາຍເຖິງ ການດໍາເນີນການເຄື່ອນຍ້າຍ ເງິນສົດ, ເງິນຝາກ ແລະ ເງິນເອເລັກໂຕຣນິກ ຈາກຜູ້ຈ່າຍ ຫາ ຜູ້ຮັບ ຜ່ານລະບົບການຊໍາລະ;
3. **ການເຊື່ອມໃຊ້ຮ່ວມກັນ (Interoperability)** ໝາຍເຖິງ ການເຊື່ອມຕໍ່ລະຫວ່າງລະບົບການຊໍາລະ ທີ່ມີຄຸນລັກສະນະຄືກັນ ຫຼື ແຕກຕ່າງກັນ ເພື່ອອໍານວຍຄວາມສະດວກ ໃນການໃຫ້ບໍລິການ ແລະ ການດໍາເນີນການຊໍາລະຮ່ວມກັນ;

4. **ບັດເງິນຝາກ (Debit Card)** ໝາຍເຖິງ ບັດຊຳລະ ທີ່ຜູກກັບບັນຊີເງິນຝາກ ຊຶ່ງສາມາດນຳໃຊ້ ຕາມຍອດເຫຼືອ ທີ່ມີໃນບັນຊີດັ່ງກ່າວ;

5. **ບັດສິນເຊື່ອ (Credit Card)** ໝາຍເຖິງ ບັດຊຳລະ ທີ່ໄດ້ເປີດວົງເງິນກູ້ ຊຶ່ງສາມາດນຳໃຊ້ ຕາມຂອບເຂດວົງເງິນກູ້ ທີ່ໄດ້ຮັບອະນຸມັດ;

6. **ບັດຕື່ມເງິນ (Prepaid Card)** ໝາຍເຖິງ ບັດຊຳລະ ທີ່ຕ້ອງຕື່ມເງິນເຂົ້າລ່ວງໜ້າ ກ່ອນການນຳໃຊ້ ແລະ ສາມາດນຳໃຊ້ ຕາມມູນຄ່າເງິນ ທີ່ມີໃນບັດດັ່ງກ່າວ;

7. **ເງິນຮັບລ່ວງໜ້າ** ໝາຍເຖິງ ເງິນທີ່ຜູ້ໃຫ້ບໍລິການຊຳລະເງິນ ໄດ້ຮັບຈາກຜູ້ໃຊ້ບໍລິການ ໃນຮູບແບບ ເງິນສົດ ຫຼື ເງິນຝາກໃນບັນຊີ ເພື່ອແລກເອົາເງິນເອເລັກໂຕຣນິກ ເຂົ້າໃນບັນຊີເງິນເອເລັກໂຕຣນິກ ແລະ ລໍຖ້າ ການສັ່ງຈ່າຍຈາກຜູ້ໃຊ້ບໍລິການ ຊຶ່ງຍອດເງິນຮັບລ່ວງໜ້າ ຕ້ອງມີມູນຄ່າເທົ່າກັບ ຍອດເງິນເອເລັກໂຕຣນິກໃນ ລະບົບ;

8. **ຜູ້ບໍລິຫານ** ໝາຍເຖິງ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຜູ້ຈັດການ ຫຼື ຜູ້ມີຕຳແໜ່ງ ທຽບເທົ່າຕຳແໜ່ງດັ່ງກ່າວ ແລະ ຄະນະກຳມະການ ທີ່ມີສິດຕັດສິນທຸກການດຳເນີນງານ ຂອງລະບົບການຊຳລະ;

9. **ຜູ້ໃຫ້ບໍລິການຈາກພາຍນອກ** ໝາຍເຖິງ ນິຕິບຸກຄົນ ທີ່ຖືກວ່າຈ້າງ ໂດຍຜູ້ຄວບຄຸມລະບົບ ການຊຳລະເງິນທົ່ວໄປ ຫຼື ຜູ້ໃຫ້ບໍລິການຊຳລະເງິນ ເພື່ອຊ່ວຍດຳເນີນງານ ແລະ ບໍລິຫານຈັດການສ່ວນໃດສ່ວນ ໜຶ່ງແທນຕົນ ເປັນຕົ້ນ ລະບົບເຕັກໂນໂລຊີ ຂໍ້ມູນ ຂ່າວສານ, ການດຳເນີນງານ, ການໃຫ້ບໍລິການທີ່ສຳຄັນ;

10. **ຜູ້ດຳເນີນທຸລະກິດການຊຳລະ** ໝາຍເຖິງ ຜູ້ຄວບຄຸມລະບົບການຊຳລະເງິນທົ່ວໄປ ແລະ ຜູ້ໃຫ້ບໍລິການຊຳລະເງິນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

11. **ເຄື່ອງອ່ານບັດ** ໝາຍເຖິງ ອຸປະກອນອ່ານບັດຊຳລະ ດ້ວຍການຮູດ ຫຼື ແຕະ ບັດຊຳລະ ເພື່ອຊຳລະ ຄ່າສິນຄ້າ ຫຼື ຄ່າບໍລິການ;

12. **ການທະນາຄານຜ່ານມືຖື (Mobile Banking)** ໝາຍເຖິງ ຊ່ອງທາງການດຳເນີນທຸລະກຳ ທາງດ້ານການເງິນ ສຳລັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີບັນຊີເງິນຝາກ ດ້ວຍໂທລະສັບມືຖືທີ່ນຳໃຊ້ໂປຣແກຣມ ໃນການດຳເນີນງານ ແລະ ປະມວນຜົນ ເພື່ອໂອນເງິນ, ຊຳລະສິນເຊື່ອ, ເປີດ-ປິດ ບັນຊີເງິນຝາກ ແລະ ອື່ນໆ;

13. **ການທະນາຄານຜ່ານອິນເຕີເນັດ (Internet Banking)** ໝາຍເຖິງ ຊ່ອງທາງການດຳເນີນ ທຸລະກຳທາງດ້ານການເງິນ ສຳລັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີບັນຊີເງິນຝາກ ດ້ວຍອຸປະກອນເອເລັກໂຕຣນິກ ຜ່ານລະບົບອິນເຕີເນັດໃນຮູບແບບເວັບເບດ (**Web Base**) ເພື່ອເບີກຈ່າຍເງິນເດືອນ, ຄ່າແຮງງານ, ໂອນເງິນຊຳ ລະຄ່າວັດຖຸດິບໃນການຜະລິດ ແລະ ອື່ນໆ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານລະບົບການຊຳລະ**

ລັດ ຊຸກຍູ້, ສົ່ງເສີມ ການພັດທະນາວຽກງານລະບົບການຊຳລະ ໃຫ້ເຂັ້ມແຂງ, ທັນສະໄໝ, ສະດວກ, ປອດໄພ ດ້ວຍການວາງນະໂຍບາຍທີ່ສອດຄ່ອງ, ສ້າງໂຄງລ່າງພື້ນຖານ, ປະກອບບຸກຄະລາກອນ, ສະໜອງງົບ ປະມານ, ວັດຖຸປະກອນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການຄຸ້ມຄອງວຽກງານລະບົບການ ຊຳລະ ແລະ ວຽກງານອື່ນທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມໃນການພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ ລະບົບການຊຳລະ ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດ.

**ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວວຽກງານລະບົບການຊໍາລະ**

ການເຄື່ອນໄຫວວຽກງານລະບົບການຊໍາລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນການຄຸ້ມຄອງການຈັດຕັ້ງປະຕິບັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນ ຄວາມໝັ້ນຄົງທາງດ້ານການເງິນ, ຄວາມປອດໄພ ແລະ ການຄຸ້ມຄອງບໍລິຫານທີ່ດີ;
4. ມີຄວາມສະເໝີພາບ, ທັນສະໄໝ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງຜູ້ໃຊ້ບໍລິການ.

**ມາດຕາ 6 (ປັບປຸງ) ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານລະບົບການຊໍາລະ ຂອງ ສປປ ລາວ ຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ, ເປີດກວ້າງ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານລະບົບການຊໍາລະ ດ້ວຍການແລກປ່ຽນ ຂໍ້ມູນ ຂ່າວສານ, ບົດຮຽນ, ປະສົບການ ແລະ ເຕັກໂນໂລຊີ, ພັດທະນາຊັບພະຍາກອນມະນຸດ ເພື່ອຄຸ້ມຄອງ, ພັດທະນາ ລະບົບການຊໍາລະ ໃຫ້ທັນສະໄໝ ສອດຄ່ອງກັບມາດຕະຖານສາກົນ ສາມາດເຊື່ອມໃຊ້ຮ່ວມກັນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ລະບົບການຊໍາລະ
### ໝວດທີ 1
### ຮູບແບບລະບົບການຊໍາລະ

**ມາດຕາ 8 (ປັບປຸງ) ຮູບແບບລະບົບການຊໍາລະ**

ລະບົບການຊໍາລະ ມີ ສາມຮູບແບບ ດັ່ງນີ້:

1. ລະບົບການຊໍາລະເງິນພື້ນຖານ;
2. ລະບົບການຊໍາລະເງິນທົ່ວໄປ;
3. ລະບົບການໃຫ້ບໍລິການຊໍາລະເງິນ.

**ມາດຕາ 9 (ໃໝ່) ລະບົບການຊໍາລະເງິນພື້ນຖານ**

ລະບົບການຊໍາລະເງິນພື້ນຖານ ແມ່ນ ລະບົບການຊໍາລະຕົ້ນຕໍຂອງປະເທດ ທີ່ເປັນສູນກາງເຊື່ອມຕໍ່ລະຫວ່າງ ສະມາຊິກດ້ວຍກັນ ຊຶ່ງປະກອບດ້ວຍ ບັນດາທະນາຄານທຸລະກິດ, ຄັງເງິນແຫ່ງຊາດ ແລະ ຕະຫຼາດຫຼັກຊັບ, ສະໜັບສະໜູນການເຄື່ອນໄຫວຂອງຕະຫຼາດເງິນ ແລະ ຕະຫຼາດທຶນ. ການຂັດຂ້ອງ ແລະ/ຫຼື ຢຸດສະງັກ

ຂອງລະບົບດັ່ງກ່າວ ຈະສົ່ງຜົນກະທົບຕໍ່ສະຖຽນລະພາບທາງດ້ານການເງິນ-ເງິນຕາ ແລະ ເສດຖະກິດຂອງປະເທດ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບົບການຊຳລະເງິນພື້ນຖານ ຕາມຂອບເຂດການນຳໃຊ້, ລະດັບຄວາມສ່ຽງຕໍ່ລະບົບການເງິນ-ເງິນຕາ ແລະ ລະດັບຄວາມສຳຄັນຕໍ່ລະບົບເສດຖະກິດ ໃນແຕ່ລະໄລຍະ.

**ມາດຕາ 10 (ໃໝ່) ລະບົບການຊຳລະເງິນທົ່ວໄປ**

ລະບົບການຊຳລະເງິນທົ່ວໄປ ແມ່ນ ລະບົບການຊຳລະທີ່ເປັນການເຊື່ອມຕໍ່ ທາງກົງ ຫຼື ທາງອ້ອມ ລະຫວ່າງ ສະມາຊິກດ້ວຍກັນ ຊຶ່ງປະກອບດ້ວຍ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ແລະ/ຫຼື ຜູ້ໃຫ້ບໍລິການຊຳລະເງິນທີ່ບໍ່ແມ່ນສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດໃຫ້ບໍລິການຊຳລະເງິນຈາກທະນາຄານແຫ່ງ ສປປ ລາວ. ການຂັດຂ້ອງ ແລະ/ຫຼື ຢຸດສະງັກຂອງລະບົບດັ່ງກ່າວ ຈະສົ່ງຜົນກະທົບ ຕໍ່ສະຖຽນລະພາບ, ຄວາມໝັ້ນຄົງຂອງລະບົບການຊຳລະເງິນທົ່ວໄປ ແລະ ຜົນປະໂຫຍດຂອງຜູ້ໃຊ້ບໍລິການ.

**ມາດຕາ 11 (ໃໝ່) ລະບົບການໃຫ້ບໍລິການຊຳລະເງິນ**

ລະບົບການໃຫ້ບໍລິການຊຳລະເງິນ ແມ່ນ ການບໍລິການຂອງຜູ້ໃຫ້ບໍລິການຊຳລະເງິນໃດໜຶ່ງ ເພື່ອຊຳລະຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ ແລະ ພັນທະອື່ນ ຜ່ານເຄື່ອງມື, ຊ່ອງທາງ ແລະ ກົນໄກ ການຊຳລະ. ການຂັດຂ້ອງ ແລະ/ຫຼື ຢຸດສະງັກຂອງລະບົບດັ່ງກ່າວ ຈະສົ່ງຜົນກະທົບ ຕໍ່ຄວາມໝັ້ນຄົງຂອງຜູ້ໃຫ້ບໍລິການຊຳລະເງິນ ແລະ ຜົນປະໂຫຍດຂອງຜູ້ໃຊ້ບໍລິການ ຊຶ່ງພາໃຫ້ຂາດຄວາມເຊື່ອໝັ້ນຕໍ່ຜູ້ໃຫ້ບໍລິການຊຳລະເງິນນັ້ນ.

## ໝວດທີ 2
## ເຄື່ອງມື ແລະ ຊ່ອງທາງ ການຊຳລະ

**ມາດຕາ 12 (ປັບປຸງ) ເຄື່ອງມືການຊຳລະ**

ເຄື່ອງມືການຊຳລະ ມີ ດັ່ງນີ້:

1. ເງິນສົດ;
2. ແຊັກ;
3. ບັດຊຳລະ;
4. ເງິນເອເລັກໂຕຣນິກ.

ນອກຈາກນີ້ ຍັງມີເຄື່ອງມືການຊຳລະອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 13 (ປັບປຸງ) ເງິນສົດ**

ເງິນສົດ ແມ່ນ ເຄື່ອງມືການຊຳລະ ທີ່ປະກອບດ້ວຍ ທະນະບັດ ແລະ ເງິນຫຼຽນ ຊຶ່ງນຳໃຊ້ເຂົ້າໃນການຊຳລະ ຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ ຫຼື ພັນທະອື່ນ.

ຫຼັກການ ແລະ ການຄຸ້ມຄອງ ການນຳໃຊ້ເງິນສົດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 (ປັບປຸງ) ແຊັກ**

ແຊັກ ແມ່ນ ເຄື່ອງມືການຊຳລະ ທີ່ນຳໃຊ້ເຂົ້າໃນການຊຳລະ ຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ ຫຼື ພັນທະອື່ນ.

ປະເພດຕົ້ນຕໍຂອງແຊັກ ປະກອບດ້ວຍ ແຊັກບົ່ງຊື່ຜູ້ຮັບ, ແຊັກບໍ່ບົ່ງຊື່ຜູ້ຮັບ, ແຊັກຈ່າຍເຂົ້າບັນຊີ ແລະ ແຊັກເດີນທາງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນຳໃຊ້ແຊັກເຂົ້າໃນການຊໍາລະ ຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ ຫຼື ພັນທະອື່ນ ຊຶ່ງຜູ້ສັ່ງຈ່າຍ ຕ້ອງຮັບຜິດຊອບຕໍ່ການສັ່ງຈ່າຍ ຕາມຈຳນວນເງິນທີ່ໄດ້ຂຽນໃສ່ໃນໃບແຊັກ ຕໍ່ຜູ້ຮັບແຊັກ ຫຼື ຜູ້ຖືແຊັກ.

ຜູ້ມີສິດອອກແຊັກ ປະກອບດ້ວຍ ທະນາຄານແຫ່ງ ສປປ ລາວ, ຄັງເງິນແຫ່ງຊາດ, ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຊຶ່ງຕ້ອງເປັນສະມາຊິກຂອງສູນຊຳລະແຊັກ.

ຜູ້ຊຳລະແຊັກ ມີໜ້າທີ່ໄລ່ລຽງແຊັກ ໃຫ້ສະມາຊິກຂອງຕົນ ເພື່ອເຮັດໃຫ້ການຊຳລະດ້ວຍແຊັກ ຢູ່ໃນສັງຄົມ ມີຄວາມຄ່ອງຕົວ.

ເນື້ອໃນຂອງໃບແຊັກ, ວິທີການນຳໃຊ້ແຊັກ, ການຢັ້ງຢືນ ແລະ ການຄໍ້າປະກັນແຊັກ, ພັນທະ ຂອງຜູ້ອອກ ແລະ ຜູ້ໃຊ້ບໍລິການແຊັກ ແລະ ການຄຸ້ມຄອງແຊັກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 (ປັບປຸງ) ບັດຊໍາລະ**

ບັດຊຳລະ ແມ່ນ ບັດທີ່ໃຊ້ໃນການຊຳລະ ຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ ຫຼື ພັນທະອື່ນ ທີ່ຜູກ ຫຼື ບໍ່ຜູກກັບບັນຊີ ເງິນຝາກ, ເງິນກູ້ ຂອງຜູ້ຖືບັດຊຳລະໃນຮູບແບບ ຈັບຕ້ອງໄດ້ ຫຼື ຈັບຕ້ອງບໍ່ໄດ້.

ບັດຊຳລະ ປະກອບດ້ວຍ ບັດເງິນຝາກ, ບັດຕື່ມເງິນ ຫຼື ບັດສິນເຊື່ອ.

ການຊຳລະດ້ວຍບັດຊຳລະ ສາມາດດຳເນີນ ພາຍໃນເຄືອຂ່າຍດຽວກັນ ຫຼື ຂ້າມເຄືອຂ່າຍ ຂອງຜູ້ໃຫ້ບໍລິການຊຳລະເງິນ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕະຖານ, ຫຼັກການ ແລະ ຂອບເຂດການນຳໃຊ້, ການຄຸ້ມຄອງການໃຫ້ບໍລິການບັດຊຳລະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ເງິນເອເລັກໂຕຣນິກ**

ເງິນເອເລັກໂຕຣນິກ ແມ່ນ ມູນຄ່າເງິນທີ່ບັນຈຸໄວ້ໃນ ແຖບແມ່ເຫຼັກ, ຊິບ, ໂປຣແກຣມ ແລະ ອື່ນໆ ໂດຍຜູ້ໃຫ້ບໍລິການຊຳລະເງິນ ອອກໃຫ້ຜູ້ໃຊ້ບໍລິການ ຕາມມູນຄ່າທີ່ນຳເງິນສົດ ຫຼື ເງິນຝາກໃນບັນຊີ ມາແລກເອົາ.

ເງິນເອເລັກໂຕຣນິກ ທີ່ຜູ້ໃຫ້ບໍລິການຊຳລະເງິນ ອອກໃນ ສປປ ລາວ ຕ້ອງເປັນສະກຸນເງິນກີບ ເທົ່ານັ້ນ.

ຜູ້ໃຫ້ບໍລິການຊຳລະເງິນ ດ້ວຍເງິນເອເລັກໂຕຣນິກ ບໍ່ສາມາດນຳໃຊ້ເງິນຮັບລ່ວງໜ້າ ຂອງຜູ້ໃຊ້ບໍລິການ ເພື່ອສະໜອງສິນເຊື່ອດ້ວຍຕົນເອງ, ຜ່ານສະຖາບັນການເງິນໃດໜຶ່ງ ຫຼື ສະໜອງສິນເຊື່ອ ໃຫ້ຜູ້ຄວບຄຸມລະບົບການຊຳລະຂອງຕົນ.

ສຳລັບເງື່ອນໄຂການເກັບຮັກສາເງິນຮັບລ່ວງໜ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 17 (ໃໝ່) ຊ່ອງທາງການຊໍາລະ**

ຊ່ອງທາງການຊຳລະ ແມ່ນ ຮູບແບບການເຂົ້າເຖິງການໃຫ້ບໍລິການຊຳລະເງິນ ທີ່ກຳນົດໂດຍຜູ້ໃຫ້ບໍລິການຊຳລະເງິນ ຊຶ່ງປະກອບດ້ວຍ:

1. ການໃຫ້ບໍລິການຊຳລະເງິນ ໂດຍພະນັກງານ ຂອງຜູ້ໃຫ້ບໍລິການຊຳລະເງິນ ຢູ່ສະຖານທີ່ໃຫ້ບໍລິການ ເປັນຕົ້ນ ສຳນັກງານ, ສາຂາ, ໜ່ວຍບໍລິການ ແລະ ຕົວແທນ ດຳເນີນການຜ່ານເຄື່ອງມືເອເລັກໂຕຣນິກໃດໜຶ່ງ;

2. ການໃຫ້ບໍລິການຊຳລະເງິນ ໂດຍຜ່ານອຸປະກອນການຊຳລະ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ເປັນຕົ້ນ ເຄື່ອງອ່ານບັດ, ຕູ້ຮັບຝາກ-ຖອນເງິນສົດ, ການທະນາຄານຜ່ານມືຖື, ການທະນາຄານຜ່ານອິນເຕີເນັດ.

ມາດຕະຖານຂອງແຕ່ລະຊ່ອງທາງການຊໍາລະ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 18 (ໃໝ່) ການພັດທະນາເຕັກໂນໂລຊີດ້ານການຊໍາລະ**

ການພັດທະນາເຕັກໂນໂລຊີດ້ານການຊໍາລະ ແມ່ນ ການນໍາໃຊ້ເຕັກໂນໂລຊີ ເຂົ້າໃນການພັດທະນາຜະລິດຕະພັນ ແລະ ລະບົບການໃຫ້ບໍລິການຊໍາລະເງິນ ໂດຍມີການກໍານົດຂອບເຂດ, ໄລຍະເວລາ ຂອງການທົດລອງນໍາໃຊ້ເຕັກໂນໂລຊີດັ່ງກ່າວ ເພື່ອເພີ່ມປະສິດທິພາບ, ອໍານວຍຄວາມສະດວກ, ຄວາມປອດໄພ, ຫຼຸດຕົ້ນທຶນ ແລະ ຕອບສະໜອງຄວາມຕ້ອງການ ໃນການໃຊ້ບໍລິການທາງດ້ານການເງິນ.

ທະນາຄານແຫ່ງ ສປປ ລາວ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມ ແລະ ອໍານວຍຄວາມສະດວກ ໃນການພັດທະນາ ລະບົບການຊໍາລະ ແລະ ເຕັກໂນໂລຊີດ້ານການຊໍາລະ.

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງພັດທະນາເຕັກໂນໂລຊີດ້ານການຊໍາລະ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນໍາທະນາຄານແຫ່ງ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການ.

**ມາດຕາ 19 (ໃໝ່) ການຊໍາລະຂ້າມແດນ**

ການຊໍາລະຂ້າມແດນ ແມ່ນ ການເຊື່ອມໃຊ້ຮ່ວມກັນ ຂອງລະບົບການຊໍາລະ ຢູ່ ສປປ ລາວ ກັບຕ່າງປະເທດ ເພື່ອຮອງຮັບການໃຫ້ບໍລິການຊໍາລະເງິນ ລະຫວ່າງ ຜູ້ຈ່າຍ ຫຼື ຜູ້ຮັບ ທີ່ມີພູມລໍາເນົາ ຢູ່ ສປປ ລາວ ກັບ ຜູ້ຈ່າຍ ຫຼື ຜູ້ຮັບ ທີ່ມີພູມລໍາເນົາຢູ່ຕ່າງປະເທດ. ການຊໍາລະຂ້າມແດນ ສາມາດປະຕິບັດໄດ້ ໃນຮູບແບບລະບົບການຊໍາລະເງິນທົ່ວໄປ ແລະ ລະບົບການໃຫ້ບໍລິການຊໍາລະເງິນ ດ້ວຍຮູບແບບສອງຝ່າຍ ຫຼື ຫຼາຍຝ່າຍ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

ຜູ້ດໍາເນີນທຸລະກິດການຊໍາລະ ທີ່ມີຈຸດປະສົງ ໃຫ້ບໍລິການຊໍາລະຂ້າມແດນ ຕ້ອງຂໍອະນຸຍາດນໍາທະນາຄານແຫ່ງ ສປປ ລາວ.

ສໍາລັບຮູບແບບ, ເງື່ອນໄຂ ແລະ ຂັ້ນຕອນ ການພິຈາລະນາອະນຸຍາດ ການໃຫ້ບໍລິການຊໍາລະຂ້າມແດນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ກົນໄກ ແລະ ຜົນການຊໍາລະ

**ມາດຕາ 20 ກົນໄກການຊໍາລະ**

ກົນໄກການຊໍາລະ ແມ່ນ ຂະບວນການຊໍາລະ ຊຶ່ງມີ ດັ່ງນີ້:

1. ການສັ່ງຈ່າຍ;
2. ການໄລ່ລຽງ;
3. ການຫັກບັນຊີ.

**ມາດຕາ 21 (ປັບປຸງ) ການສັ່ງຈ່າຍ**

ການສັ່ງຈ່າຍ ແມ່ນ ການອອກຄໍາສັ່ງໂອນເງິນ ດ້ວຍເອກະສານ ຫຼື ເຄື່ອງມືເອເລັກໂຕຣນິກ ຜ່ານຊ່ອງທາງການຊໍາລະ ເພື່ອປະຕິບັດຕາມ ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ.

**ມາດຕາ 22 ການໄລ່ລຽງ**

ການໄລ່ລຽງ ແມ່ນ ການປຽບທຽບ ແລະ ຈັດລຽງ ມູນຄ່າທຸລະກຳ ລະຫວ່າງ ສາຂາ, ໜ່ວຍບໍລິການ ຫຼື ຕົວແທນ ຂອງຜູ້ໃຫ້ບໍລິການຊຳລະເງິນ ຢູ່ໃນເຄືອຂ່າຍດຽວກັນ ຫຼື ລະຫວ່າງ ຜູ້ໃຫ້ບໍລິການຊຳລະເງິນຂ້າມເຄືອຂ່າຍ ເພື່ອຄິດໄລ່ຍອດເຫຼືອສຸດທິ ແລ້ວນຳໄປຫັກບັນຊີ.

ການໄລ່ລຽງທຸລະກຳຂ້າມເຄືອຂ່າຍ ຕ້ອງປະຕິບັດຕາມລະບຽບການ ທີ່ອອກໂດຍຜູ້ຄວບຄຸມລະບົບການຊຳລະ ທີ່ໄດ້ຮັບຮອງຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 23 ການຫັກບັນຊີ**

ການຫັກບັນຊີ ແມ່ນ ການຕັດເງິນອອກຈາກບັນຊີຂອງຜູ້ຈ່າຍເງິນ ແລ້ວເອົາເງິນເຂົ້າໃນບັນຊີຂອງຜູ້ຮັບເງິນ.

ການຫັກບັນຊີ ມີ ສອງປະເພດ ດັ່ງນີ້:

1. ການຫັກບັນຊີຕາມຈຳນວນສັ່ງຫັກ ຊຶ່ງແມ່ນ ການຫັກບັນຊີທັນທີເປັນແຕ່ລະທຸລະກຳ ໂດຍຫັກບັນຊີຕາມຄຳສັ່ງໂອນເງິນ ທີ່ເກີດຂຶ້ນທັນທີ ພາຍຫຼັງໄດ້ຮັບຄຳສັ່ງຈ່າຍ ເປັນແຕ່ລະລາຍການ;
2. ການຫັກບັນຊີສຸດທິ ຊຶ່ງແມ່ນ ການຫັກບັນຊີ ຕາມມູນຄ່າຍອດເຫຼືອສຸດທິ ໜຶ່ງຄັ້ງ ຫຼື ຫຼາຍຄັ້ງຕໍ່ວັນ ພາຍຫຼັງການໄລ່ລຽງ ຕາມການກຳນົດຂອງຜູ້ຄວບຄຸມລະບົບການຊຳລະ.

**ມາດຕາ 24 (ປັບປຸງ) ຜົນການຊຳລະ**

ການຊຳລະ ຈະມີຜົນສຳເລັດໄດ້ ກໍຕໍ່ເມື່ອເງິນໃນບັນຊີຂອງຜູ້ຈ່າຍເງິນ ໄດ້ຖືກຫັກ ແລະ ໂອນເຂົ້າບັນຊີຂອງຜູ້ຮັບເງິນ.

ການຊຳລະຜິດພາດ ແມ່ນ ການຊຳລະທີ່ຜູ້ສັ່ງຈ່າຍສົ່ງຄຳສັ່ງເຂົ້າໃນລະບົບການຊຳລະ ຊຶ່ງອາດຈະສຳເລັດ ຫຼື ບໍ່ສຳເລັດ ແຕ່ເກີດຄວາມຜິດພາດ ເນື່ອງຈາກລະບົບຂອງຜູ້ໃຫ້ບໍລິການຊຳລະເງິນຂັດຂ້ອງ, ຄວາມບົກພ່ອງຂອງຜູ້ໃຫ້ບໍລິການຊຳລະເງິນ ຫຼື ຜູ້ໃຊ້ບໍລິການ ເປັນຕົ້ນ ຊື່, ເລກບັນຊີ, ສະກຸນເງິນ ຫຼື ຈຳນວນເງິນ ບໍ່ຖືກຕ້ອງ.

**ມາດຕາ 25 (ໃໝ່) ການແກ້ໄຂການຊຳລະຜິດພາດ**

ການຊຳລະຜິດພາດ ທີ່ເກີດຈາກລະບົບຂັດຂ້ອງ ຫຼື ຄວາມບົກພ່ອງ ຂອງຜູ້ໃຫ້ບໍລິການຊຳລະເງິນນັ້ນ ຜູ້ໃຫ້ບໍລິການຊຳລະເງິນ ຕ້ອງດຳເນີນການແກ້ໄຂການຊຳລະຜິດພາດ ແລະ ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນໃຫ້ຜູ້ໃຊ້ບໍລິການ ຕາມກົດໝາຍ.

ການຊຳລະຜິດພາດ ທີ່ເກີດຈາກຄວາມບົກພ່ອງ ຂອງຜູ້ໃຊ້ບໍລິການເອງນັ້ນ ຜູ້ໃຊ້ບໍລິການ ຕ້ອງເປັນເຈົ້າການແກ້ໄຂດ້ວຍຕົນເອງ ຫຼື ສະເໜີຜູ້ໃຫ້ບໍລິການຊຳລະເງິນ ສະໜອງຂໍ້ມູນ, ຊ່ວຍໄກ່ເກ່ຍ, ແກ້ໄຂການຊຳລະຜິດພາດ ໃຫ້ຖືກຕ້ອງຕາມກົດໝາຍ.

ຜູ້ຄວບຄຸມລະບົບການຊຳລະ ແລະ ຜູ້ໃຫ້ບໍລິການຊຳລະເງິນ ເປັນຜູ້ກຳນົດເງື່ອນໄຂ ແລະ ຂັ້ນຕອນການແກ້ໄຂການຊຳລະຜິດພາດ.

# ພາກທີ III
# ຜູ້ຄວບຄຸມລະບົບການຊໍາລະ, ຜູ້ໃຫ້ບໍລິການຊໍາລະເງິນ ແລະ ຜູ້ໃຊ້ບໍລິການ
## ໝວດທີ 1
## ຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະເງິນ

**ມາດຕາ 26 (ປັບປຸງ) ຜູ້ຄວບຄຸມລະບົບການຊໍາລະ**

ຜູ້ຄວບຄຸມລະບົບການຊໍາລະ ປະກອບດ້ວຍ ຜູ້ຄວບຄຸມລະບົບການຊໍາລະເງິນພື້ນຖານ ແລະ ຜູ້ຄວບຄຸມລະບົບການຊໍາລະເງິນທົ່ວໄປ.

ຜູ້ຄວບຄຸມລະບົບການຊໍາລະເງິນພື້ນຖານ ແມ່ນ ທະນາຄານແຫ່ງ ສປປ ລາວ ຫຼື ຜູ້ທີ່ທະນາຄານແຫ່ງ ສປປ ລາວ ກໍານົດໃຫ້ເປັນຜູ້ຄວບຄຸມ ແລະ ໃຫ້ບໍລິການ ໄລ່ລຽງ ແລະ/ຫຼື ຫັກບັນຊີ ລະຫວ່າງສະມາຊິກຂອງຕົນ.

ຜູ້ຄວບຄຸມລະບົບການຊໍາລະເງິນທົ່ວໄປ ແມ່ນ ສະຖາບັນການເງິນ ທີ່ເຮັດໜ້າທີ່ເປັນຜູ້ຄວບຄຸມ ແລະ ໃຫ້ບໍລິການ ໄລ່ລຽງ ແລະ/ຫຼື ຫັກບັນຊີ ຂອງລະບົບການຊໍາລະເງິນທົ່ວໄປນັ້ນ.

**ມາດຕາ 27 (ໃໝ່) ສິດ ແລະ ໜ້າທີ່ ຂອງຜູ້ຄວບຄຸມລະບົບການຊໍາລະເງິນພື້ນຖານ**

ຜູ້ຄວບຄຸມລະບົບການຊໍາລະເງິນພື້ນຖານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານລະບົບການຊໍາລະ ມາເປັນແຜນການ, ແຜນງານ ໂຄງການ ເພື່ອຈັດຕັ້ງປະຕິບັດ;
2. ກໍານົດນະໂຍບາຍ ແລະ ລະບຽບການ ກ່ຽວກັບການດໍາເນີນງານ ຂອງລະບົບການຊໍາລະເງິນພື້ນຖານ;
3. ຄົ້ນຄວ້າກໍານົດ ເງື່ອນໄຂການເປັນສະມາຊິກ, ສິດ ແລະ ໜ້າທີ່ ຂອງສະມາຊິກລະບົບການຊໍາລະເງິນພື້ນຖານ ລວມທັງການໂຈະການເຄື່ອນໄຫວ ແລະ ການສິ້ນສຸດການເປັນສະມາຊິກ;
4. ຈັດຝຶກອົບຮົມ, ເຜີຍແຜ່ ແລະ ໃຫ້ຄໍາແນະນໍາ ກ່ຽວກັບລະບົບການຊໍາລະເງິນພື້ນຖານໃຫ້ສະມາຊິກ;
5. ສ້າງກົນໄກປ້ອງກັນຄວາມສ່ຽງ ເປັນຕົ້ນ ດ້ານສະພາບຄ່ອງ, ການດໍາເນີນງານ, ດ້ານເຕັກໂນໂລຊີຂໍ້ມູນ ຂ່າວສານ;
6. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຮອງຮັບຄວາມຕໍ່ເນື່ອງຂອງທຸລະກິດ ແລະ ແຜນປ້ອງກັນເຫດສຸກເສີນ;
7. ຮຽກຮ້ອງໃຫ້ສະມາຊິກ ນໍາເອົາເງິນສົດ ຫຼື ເງິນຝາກ ມາໄວ້ກັບຕົນ ເພື່ອຮັບປະກັນຄວາມສ່ຽງດ້ານສະພາບຄ່ອງ;
8. ປະເມີນ ແລະ ທົດສອບຄວາມສ່ຽງ ຂອງລະບົບການຊໍາລະເງິນພື້ນຖານ;
9. ຕິດຕາມ ກວດກາ ການນໍາໃຊ້ລະບົບການຊໍາລະເງິນພື້ນຖານ ຂອງສະມາຊິກ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ຄວບຄຸມລະບົບການຊໍາລະເງິນທົ່ວໄປ**

ຜູ້ຄວບຄຸມລະບົບການຊໍາລະເງິນທົ່ວໄປ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານລະບົບການຊໍາລະ ມາເປັນແຜນການດໍາເນີນທຸລະກິດຂອງຕົນ ແລະ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;
2. ສ້າງ ແລະ ປັບປຸງ ລະບຽບການ, ຄູ່ມື ກ່ຽວກັບການດໍາເນີນງານ ແລະ ການຄວບຄຸມລະບົບການຊໍາລະຂອງຕົນ ໃຫ້ສອດຄ່ອງກັບກົດໝາຍ;

3. ຄົ້ນຄວ້າກຳນົດ ເງື່ອນໄຂການເປັນສະມາຊິກ, ສິດ ແລະ ໜ້າທີ່ ຂອງສະມາຊິກລະບົບການຊຳລະເງິນທົ່ວໄປ ລວມທັງ ການໂຈະການເຄື່ອນໄຫວ ແລະ ການສິ້ນສຸດການເປັນສະມາຊິກ;

4. ກຳນົດ ແລະ ແຈ້ງ ຄ່າບໍລິການ, ເງື່ອນໄຂກ່ຽວກັບການໃຫ້ບໍລິການ ໃຫ້ແກ່ສະມາຊິກ;

5. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຮອງຮັບຄວາມຕໍ່ເນື່ອງຂອງທຸລະກິດ ແລະ ແຜນປ້ອງກັນເຫດສຸກເສີນ;

6. ຮຽກຮ້ອງໃຫ້ສະມາຊິກ ນຳເອົາເງິນສົດ ຫຼື ເງິນຝາກ ມາໄວ້ກັບຕົນ ເພື່ອຮັບປະກັນຄວາມສ່ຽງດ້ານສະພາບຄ່ອງ;

7. ປະຕິບັດລະບຽບການ ກ່ຽວກັບຄວາມໝັ້ນຄົງທາງດ້ານການຊຳລະ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;

8. ວ່າຈ້າງຜູ້ໃຫ້ບໍລິການຈາກພາຍນອກ ເພື່ອຊ່ວຍຄວບຄຸມ ແລະ ໃຫ້ບໍລິການລະບົບການຊຳລະແທນຕົນ ພ້ອມທັງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ຜູ້ໃຫ້ບໍລິການຈາກພາຍນອກກໍ່ຂຶ້ນ ຄືກັບຕົນເປັນຜູ້ຄວບຄຸມ ແລະໃຫ້ບໍລິການລະບົບນັ້ນເອງ;

9. ເກັບຮັກສາຂໍ້ມູນ ກ່ຽວກັບການຄວບຄຸມ ແລະ ໃຫ້ບໍລິການລະບົບການຊຳລະຂອງຕົນ;

10. ແກ້ໄຂຂໍ້ຂັດແຍ່ງ ທີ່ຕິດພັນກັບລະບົບການຊຳລະຂອງຕົນ;

11. ຮັບຜິດຊອບ ແລະ ໃຊ້ແທນຄ່າເສຍຫາຍ ທີ່ເກີດຈາກຄວາມຜິດພາດ ໃນລະບົບການຊຳລະຂອງຕົນ;

12. ປະຕິບັດລະບອບການລາຍງານ ແລະ ສະໜອງຂໍ້ມູນ ໃຫ້ທະນາຄານແຫ່ງ ສປປ ລາວ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 (ປັບປຸງ) ຜູ້ໃຫ້ບໍລິການຊຳລະເງິນ**

ຜູ້ໃຫ້ບໍລິການຊຳລະເງິນ ແມ່ນ ສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວໃນການໃຫ້ບໍລິການຊຳລະເງິນ ຜ່ານເຄື່ອງມືຊຳລະໃດໜຶ່ງ ຫຼື ຫຼາຍເຄື່ອງມື ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້ ຊຶ່ງມີລະບົບການຊຳລະເປັນຂອງຕົນເອງ ຫຼື ເຊື່ອມຕໍ່ກັບລະບົບການຊຳລະອື່ນ.

**ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ໃຫ້ບໍລິການຊຳລະເງິນ**

ຜູ້ໃຫ້ບໍລິການຊຳລະເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ບໍລິການຊຳລະເງິນ ຜ່ານເຄື່ອງມືການຊຳລະ ແລະ ລະບົບການໃຫ້ບໍລິການຊຳລະເງິນ ຕາມທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

2. ສ້າງ ແລະ ປັບປຸງ ລະບຽບການ, ຄູ່ມື ກ່ຽວກັບການດຳເນີນງານ ແລະ ການໃຫ້ບໍລິການຂອງຕົນໃຫ້ສອດຄ່ອງກັບກົດໝາຍ;

3. ປະຕິບັດລະບຽບການ ກ່ຽວກັບຄວາມໝັ້ນຄົງທາງດ້ານການຊຳລະ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;

4. ປະຕິບັດຕາມຫຼັກການການຊອກຮູ້ຂໍ້ມູນ ແລະ ຮັກສາຄວາມລັບ ກ່ຽວກັບຂໍ້ມູນ ຂອງຜູ້ໃຊ້ບໍລິການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5. ກຳນົດ ແລະ ແຈ້ງ ຄ່າບໍລິການ, ເງື່ອນໄຂ ກ່ຽວກັບການໃຫ້ບໍລິການຊຳລະເງິນ ໃຫ້ຜູ້ໃຊ້ບໍລິການ;

6. ວ່າຈ້າງຜູ້ໃຫ້ບໍລິການຈາກພາຍນອກ ເພື່ອໃຫ້ບໍລິການຊໍາລະເງິນແທນຕົນ ພ້ອມທັງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ຜູ້ໃຫ້ບໍລິການຈາກພາຍນອກກໍ່ຂຶ້ນ ຄືກັບຕົນເປັນຜູ້ໃຫ້ບໍລິການນັ້ນເອງ;

7. ແຕ່ງຕັ້ງຕົວແທນ ເພື່ອໃຫ້ບໍລິການແທນຕົນ;

8. ເກັບຮັກສາຂໍ້ມູນທຸລະກໍາ ກ່ຽວກັບການໃຫ້ບໍລິການຊໍາລະເງິນຂອງຕົນ;

9. ແກ້ໄຂຂໍ້ຂັດແຍ່ງ ທີ່ຕິດພັນກັບການໃຫ້ບໍລິການຊໍາລະເງິນຂອງຕົນ;

10. ໂຈະການເຄື່ອນໄຫວບັນຊີຂອງຜູ້ຮັບເງິນ ໃນວົງເງິນທີ່ໄດ້ຮັບຈາກການໂອນເງິນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໄວ້ເຈັດສິບສອງຊົ່ວໂມງ ນັບແຕ່ເວລາໄດ້ຮັບການສະເໜີ ຢ່າງເປັນລາຍລັກອັກສອນຂອງ ຜູ້ໂອນເງິນ;

11. ສະເໜີຜູ້ໃຫ້ບໍລິການຊໍາລະເງິນອື່ນ ໂຈະການເຄື່ອນໄຫວບັນຊີຂອງຜູ້ຮັບເງິນໃນວົງເງິນ ທີ່ຕົນໄດ້ໂອນຜິດພາດ;

12. ຮັບຜິດຊອບ ແລະ ໃຊ້ແທນຄ່າເສຍຫາຍ ທີ່ເກີດຈາກຄວາມຜິດພາດຂອງຕົນ;

13. ປະຕິບັດລະບອບການລາຍງານ ແລະ ສະໜອງຂໍ້ມູນ ໃຫ້ທະນາຄານແຫ່ງ ສປປ ລາວ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 2
## ການອະນຸຍາດ

### ມາດຕາ 31 (ປັບປຸງ) ການຂໍອະນຸຍາດ

ນິຕິບຸກຄົນ ທີ່ມີຈຸດປະສົງດໍາເນີນທຸລະກິດການຊໍາລະ ຕ້ອງໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ກ່ອນ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດໍາເນີນທຸລະກິດການຊໍາລະ ນໍາທະນາຄານແຫ່ງ ສປປ ລາວ.

ສໍາລັບທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດເປັນຜູ້ໃຫ້ບໍລິການຊໍາລະເງິນ ໂດຍບໍ່ຈໍາເປັນຕ້ອງຂໍອະນຸຍາດດໍາເນີນທຸລະກິດການຊໍາລະ. ສໍາລັບການເປັນຜູ້ຄວບຄຸມລະບົບການຊໍາລະເງິນທົ່ວໄປ ຕ້ອງໄດ້ຂໍອະນຸຍາດດໍາເນີນທຸລະກິດ ນໍາທະນາຄານແຫ່ງ ສປປ ລາວ.

ເອກະສານປະກອບ ການຂໍອະນຸຍາດດໍາເນີນທຸລະກິດການຊໍາລະ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 32 (ປັບປຸງ) ເງື່ອນໄຂການຂໍອະນຸຍາດ

ເງື່ອນໄຂການຂໍອະນຸຍາດດໍາເນີນທຸລະກິດການຊໍາລະ ມີ ດັ່ງນີ້:

1. ການຂໍອະນຸຍາດເປັນຜູ້ຄວບຄຸມລະບົບການຊໍາລະເງິນທົ່ວໄປ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

1.1. ເປັນນິຕິບຸກຄົນ;

1.2. ມີຖານະການເງິນທີ່ໝັ້ນຄົງ ແລະ ທຶນໃນການດໍາເນີນທຸລະກິດ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;

1.3. ມີບົດວິພາກເສດຖະກິດ-ເຕັກນິກ;

1.4. ມີຜູ້ບໍລິຫານ ທີ່ມີຄຸນວຸດທິ, ປະສົບການທາງດ້ານການເງິນ-ການທະນາຄານ, ເຕັກໂນໂລຊີຂໍ້ມູນ ຂ່າວສານ ຫຼື ຂະແໜງອື່ນທີ່ກ່ຽວຂ້ອງ ພ້ອມທັງບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນການກະທໍາຜິດໂດຍເຈດຕະນາ ເປັນຕົ້ນ ການກະທໍາຜິດທາງດ້ານການເງິນ, ການທະນາຄານ, ການຟອກເງິນ;

1.5. ມີພະນັກງານ ທີ່ມີຄວາມຮູ້, ຄວາມສາມາດ ທາງດ້ານການເງິນ-ການທະນາຄານ, ເຕັກໂນໂລຊີ ຂໍ້ມູນ ຂ່າວສານ ຫຼື ຂະແໜງອື່ນທີ່ກ່ຽວຂ້ອງ;

1.6. ມີລະບົບການດຳເນີນງານ ລວມທັງລະບົບເຕັກໂນໂລຊີ ຂໍ້ມູນ ຂ່າວສານ ແລະ ລະບົບການຄວບຄຸມພາຍໃນ;

1.7. ມີສະຖານທີ່ຕັ້ງທີ່ເໝາະສົມ;

1.8. ເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

2. ການຂໍອະນຸຍາດເປັນຜູ້ໃຫ້ບໍລິການຊຳລະເງິນ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

2.1. ມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້;

2.2. ມີລະບົບປ້ອງກັນຊັບສິນ ທີ່ໄດ້ມາຈາກຜູ້ໃຊ້ບໍລິການ ຫຼື ຜ່ານຜູ້ໃຫ້ບໍລິການຊຳລະເງິນອື່ນ;

2.3. ມີລະບົບການເຊື່ອມຕໍ່ກັບລະບົບການຊຳລະເງິນ ໃນ ສປປ ລາວ.

**ມາດຕາ 33 (ປັບປຸງ) ການພິຈາລະນາ**

ທະນາຄານແຫ່ງ ສປປ ລາວ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດການຊຳລະ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີບໍ່ເຫັນດີ ຕ້ອງແຈ້ງຕອບຜູ້ຂໍອະນຸຍາດດຳເນີນທຸລະກິດ ຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນານັ້ນ ຖ້າເຫັນວ່າມີຄວາມຈຳເປັນ ທະນາຄານແຫ່ງ ສປປ ລາວ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ, ເຊີນຜູ້ທີ່ກ່ຽວຂ້ອງ ມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

**ມາດຕາ 34 (ປັບປຸງ) ການນຳໃຊ້ໃບອະນຸຍາດດຳເນີນທຸລະກິດການຊຳລະ**

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງນຳໃຊ້ໃບອະນຸຍາດດຳເນີນທຸລະກິດການຊຳລະ ໃຫ້ຖືກຕ້ອງຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໂດຍບໍ່ມີສິດ ມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້.

ໃບອະນຸຍາດດຳເນີນທຸລະກິດການຊຳລະ ມີອາຍຸການນຳໃຊ້ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ສາມາດຕໍ່ໃບອະນຸຍາດດຳເນີນທຸລະກິດດັ່ງກ່າວໄດ້.

## ໝວດທີ 3
## ການຮັກສາຄວາມໝັ້ນຄົງ, ການບັນຊີ,
## ການລາຍງານ ແລະ ການກວດສອບ

**ມາດຕາ 35 (ໃໝ່) ການຮັກສາຄວາມໝັ້ນຄົງ**

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງປະຕິບັດຕາມຫຼັກການຮັກສາຄວາມໝັ້ນຄົງ ເປັນຕົ້ນ ການປະຕິບັດຄວາມພຽງພໍຂອງທຶນ, ກົນໄກການຄວບຄຸມຄວາມສ່ຽງ, ການຄຸ້ມຄອງບໍລິຫານພາຍໃນທີ່ດີ, ຄວາມປອດໄພຂອງລະບົບການຊຳລະຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

**ມາດຕາ 36 (ໃໝ່) ການບັນຊີ**

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງຖືບັນຊີ ລວມທັງບັນທຶກບັນຊີຕາມຜັງບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

ປີການບັນຊີຂອງຜູ້ດຳເນີນທຸລະກິດການຊຳລະ ເລີ່ມຕົ້ນ ໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

**ມາດຕາ 37 (ໃໝ່) ເອກະສານລາຍງານການເງິນ**

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງສ້າງເອກະສານລາຍງານການເງິນ ປະຈຳ ເດືອນ, ໄຕມາດ ແລະ ປີ. ເອກະສານລາຍງານການເງິນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

**ມາດຕາ 38 (ໃໝ່) ການລາຍງານ**

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງລາຍງານການເຄື່ອນໄຫວທຸລະກິດຂອງຕົນ ຕາມລະບຽບການ ແລະ ແບບພິມລາຍງານ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 39 (ໃໝ່) ການເກັບຮັກສາຂໍ້ມູນ**

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງເກັບຮັກສາຂໍ້ມູນ, ເອກະສານ ແລະ/ຫຼື ບັນທຶກທາງເອເລັກໂຕຣນິກ ກ່ຽວກັບການດຳເນີນທຸລະກຳຂອງຕົນ ເພື່ອອຳນວຍຄວາມສະດວກ ໃນການກວດກາ ຫຼື ການດຳເນີນການ ທີ່ອາດຈະເກີດຂຶ້ນ.

ຂໍ້ມູນ, ເອກະສານ ແລະ ການບັນທຶກທາງເອເລັກໂຕຣນິກ ຕ້ອງເກັບຮັກສາໄວ້ ຢ່າງໜ້ອຍ ສິບປີ ພາຍຫຼັງເອກະສານ, ທຸລະກຳ ໄດ້ສຳເລັດ ຫຼື ສັນຍາ ໄດ້ສິ້ນສຸດລົງ.

**ມາດຕາ 40 (ໃໝ່) ການກວດສອບ**

ໃນແຕ່ລະປີ ຜູ້ດຳເນີນທຸລະກິດການຊຳລະ ຕ້ອງໄດ້ຮັບການກວດສອບ ໂດຍບໍລິສັດກວດສອບ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງການຖືບັນຊີ, ເອກະສານລາຍງານການເງິນ, ລະບົບຄວບຄຸມພາຍໃນ, ປະສິດທິພາບຂອງການດຳເນີນງານ ພ້ອມທັງໃຫ້ຄຳແນະນຳ ກ່ຽວກັບມາດຕະການແກ້ໄຂ.

ຜູ້ດຳເນີນທຸລະກິດການຊຳລະ ຕ້ອງດຳເນີນການຄັດເລືອກ ແລະ ວ່າຈ້າງບໍລິສັດກວດສອບ ຕາມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດ.

## ໝວດທີ 4
## ການໂຈະ ແລະ ການຖອນ

**ມາດຕາ 41 (ໃໝ່) ການໂຈະການດຳເນີນທຸລະກິດການຊຳລະ**

ຜູ້ດຳເນີນທຸລະກິດການຊຳລະ ຈະຖືກໂຈະການເຄື່ອນໄຫວທຸລະກິດ ທັງໝົດ ຫຼື ບາງສ່ວນ ຕາມກໍລະນີ ໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດການຊຳລະ;
2. ໄດ້ຮັບການອະນຸຍາດດຳເນີນທຸລະກິດບົນພື້ນຖານການສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ;
3. ດຳເນີນທຸລະກິດບໍ່ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ;
4. ບໍ່ປະຕິບັດພັນທະອາກອນ ແລະ ພັນທະອື່ນ ຕາມກົດໝາຍ;
5. ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບລະບົບການຊຳລະ.

ໃນກໍລະນີຜູ້ດຳເນີນທຸລະກິດການຊຳລະ ຫາກບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ທະນາຄານແຫ່ງ ສປປ ລາວ ອອກຄຳສັ່ງໂຈະການດຳເນີນທຸລະກິດ.

### ມາດຕາ 42 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດການຊຳລະ

ຜູ້ດຳເນີນທຸລະກິດການຊຳລະ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດການຊຳລະ;
2. ບໍ່ແກ້ໄຂ ແລະ ປັບປຸງ ຕາມຄຳສັ່ງໂຈະ;
3. ນຳເອົາໃບອະນຸຍາດດຳເນີນທຸລະກິດການຊຳລະ ໃຫ້ນິຕິບຸກຄົນອື່ນນຳໃຊ້;
4. ຖືກສານຕັດສິນ ໃຫ້ຍຸບເລີກ ຫຼື ລົ້ມລະລາຍ;
5. ບໍ່ດຳເນີນ ຫຼື ບໍ່ສາມາດດຳເນີນທຸລະກິດການຊຳລະ ໄດ້ຢ່າງເປັນປົກກະຕິ ຕໍ່ເນື່ອງ ເປັນເວລາ ໜຶ່ງ ປີ ພາຍຫຼັງໄດ້ຮັບໃບອະນຸຍາດ;
6. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊຳລະ ທີ່ມີລັກສະນະຮ້າຍແຮງ.

ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງການຖອນໃບອະນຸຍາດດຳເນີນທຸລະກິດການຊຳລະ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອລຶບຊື່ອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດ ພ້ອມທັງແຈ້ງໃຫ້ມວນຊົນ ຜ່ານພາຫະນະສື່ມວນຊົນ ເປັນເວລາ ສິບຫ້າວັນ ຕໍ່ເນື່ອງ ນັບແຕ່ວັນໄດ້ຖອນໃບອະນຸຍາດດຳເນີນທຸລະກິດການຊຳລະ ເປັນຕົ້ນໄປ.

### ມາດຕາ 43 (ໃໝ່) ການຊຳລະສະສາງ

ຜູ້ດຳເນີນທຸລະກິດການຊຳລະ ທີ່ຖືກຖອນໃບອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້ ຕ້ອງດຳເນີນການຊຳລະສະສາງ ຕາມກໍລະນີ ດັ່ງນີ້:

1. ການສະເໜີຖອນໃບອະນຸຍາດດຳເນີນທຸລະກິດການຊຳລະ ດ້ວຍຄວາມສະໝັກໃຈນັ້ນ ຜູ້ດຳເນີນທຸລະກິດການຊຳລະ ຕ້ອງດຳເນີນການຊຳລະສະສາງ ໃຫ້ສຳເລັດກ່ອນ ແລ້ວທະນາຄານແຫ່ງ ສປປ ລາວ ຈຶ່ງຖອນໃບອະນຸຍາດດຳເນີນທຸລະກິດດັ່ງກ່າວ;
2. ການຖອນໃບອະນຸຍາດດຳເນີນທຸລະກິດການຊຳລະ ຕາມມາດຕາ 42 ຂໍ້ 2, 3, 5 ແລະ 6 ຂອງກົດໝາຍສະບັບນີ້ ໃຫ້ທະນາຄານແຫ່ງ ສປປ ລາວ ແຕ່ງຕັ້ງຄະນະຊຳລະສະສາງ ແລະ ດຳເນີນການຊຳລະສະສາງ;
3. ການຖອນໃບອະນຸຍາດດຳເນີນທຸລະກິດການຊຳລະ ເນື່ອງຈາກຖືກສານຕັດສິນ ໃຫ້ຍຸບເລີກ ຫຼື ລົ້ມລະລາຍນັ້ນ ໃຫ້ດຳເນີນການຊຳລະສະສາງ ຕາມກົດໝາຍ.

## ໝວດທີ 5
## ຜູ້ໃຊ້ບໍລິການ

### ມາດຕາ 44 (ປັບປຸງ) ຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ດຳເນີນທຸລະກຳ ຜ່ານຜູ້ຄວບຄຸມລະບົບການຊຳລະ ແລະ/ຫຼື ຜູ້ໃຫ້ບໍລິການຊຳລະເງິນ.

### ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເອົາຂໍ້ມູນທີ່ຈຳເປັນ ຈາກຜູ້ຄວບຄຸມລະບົບການຊຳລະ ຫຼື ຜູ້ໃຫ້ບໍລິການຊຳລະເງິນ;
2. ສຶກສາ, ຄົ້ນຄວ້າ, ຮຽນຮູ້ ການນຳໃຊ້ ເຄື່ອງມືການຊຳລະທີ່ທັນສະໄໝ;
3. ໄດ້ຮັບຂໍ້ມູນການເຄື່ອນໄຫວທຸລະກຳ ຈາກຜູ້ຄວບຄຸມລະບົບການຊຳລະ ຫຼື ຜູ້ໃຫ້ບໍລິການຊຳລະເງິນ;

4. ນຳໃຊ້ເຄື່ອງມືການຊຳລະ ໃຫ້ຖືກຕ້ອງຕາມການກຳນົດຂອງຜູ້ຄວບຄຸມລະບົບການຊຳລະ ຫຼື ຜູ້ໃຫ້ບໍລິການຊຳລະເງິນ;

5. ໃຫ້ການຮ່ວມມືໃນການກວດກາ ຂອງທະນາຄານແຫ່ງ ສປປ ລາວ, ຜູ້ຄວບຄຸມລະບົບການຊຳລະ ຫຼື ຜູ້ໃຫ້ບໍລິການຊຳລະເງິນ;

6. ສະໜອງຂໍ້ມູນທີ່ກ່ຽວຂ້ອງ ໃຫ້ຜູ້ຄວບຄຸມລະບົບການຊຳລະ ຫຼື ຜູ້ໃຫ້ບໍລິການຊຳລະເງິນ ເພື່ອນຳໃຊ້ເຂົ້າໃນການແກ້ໄຂການຊຳລະຜິດພາດ;

7. ທວງເອົາຄ່າເສຍຫາຍທີ່ເກີດຂຶ້ນ ໃນກໍລະນີເກີດຄວາມຜິດພາດຈາກການນຳໃຊ້ລະບົບການຊຳລະ;

8. ສະເໜີ ຜູ້ຄວບຄຸມລະບົບການຊຳລະ, ຜູ້ໃຫ້ບໍລິການຊຳລະເງິນ, ທະນາຄານແຫ່ງ ສປປ ລາວ, ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 46 (ປັບປຸງ) ການປົກປ້ອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ຕ້ອງໄດ້ຮັບການບໍລິການ ຢ່າງມີຄຸນນະພາບ, ປອດໄພ, ໂປ່ງໃສ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ສາມາດສົ່ງຂ່າວ, ປະກອບຄຳເຫັນ ກ່ຽວກັບການໃຫ້ບໍລິການຊຳລະເງິນ ຕໍ່ຜູ້ຄວບຄຸມລະບົບການຊຳລະ, ຜູ້ໃຫ້ບໍລິການຊຳລະເງິນ ຫຼື ອົງການທີ່ມີສິດອຳນາດ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນຕາມກົດໝາຍ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 47 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດການຊຳລະ ໂດຍບໍ່ໄດ້ຮັບອະນຸຍາດ;

2. ແອບອ້າງ ຫຼື ໂຄສະນາ, ບິດເບືອນ ທີ່ສ້າງຜົນເສຍຫາຍ ຕໍ່ລະບົບການຊຳລະ, ຜູ້ໃຊ້ບໍລິການ ແລະ ສ້າງຜົນເສຍຫາຍ ໃຫ້ແກ່ສັງຄົມ;

3. ສວຍໃຊ້ລະບົບການຊຳລະ ຫຼື ມອບເຄື່ອງມືການຊຳລະຂອງຕົນ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ນຳໃຊ້ເຂົ້າໃນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ສວຍໃຊ້ລະບົບການຊຳລະ ຫຼື ດຳເນີນທຸລະກຳ ທີ່ມີລັກສະນະປັ່ນປ່ວນສະຖຽນລະພາບການເງິນ-ເງິນຕາ;

5. ປະຕິເສດ, ຂັດຂວາງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ໃຫ້ຄວາມຮ່ວມມືໃນການປະຕິບັດໜ້າທີ່ຂອງທະນາຄານແຫ່ງ ສປປ ລາວ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ປັ່ນປ່ວນລະບົບການຊຳລະ ແລະ/ຫຼື ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດຳເນີນງານຂອງລະບົບການຊຳລະດັ່ງກ່າວ ແລະ/ຫຼື ຜູ້ໃຊ້ບໍລິການ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ຄວບຄຸມລະບົບການຊໍາລະ**

ຫ້າມ ຜູ້ຄວບຄຸມລະບົບການຊໍາລະ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບທຸລະກໍາຂອງຜູ້ໃຊ້ບໍລິການຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຄວບຄຸມລະບົບການຊໍາລະ ໂດຍບໍ່ໄດ້ຮັບອະນຸຍາດ;
3. ນໍາໃຊ້ເຕັກໂນໂລຊີ ທີ່ບໍ່ໄດ້ຮັບອະນຸຍາດ ເຂົ້າໃນລະບົບການຊໍາລະ;
4. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອໍາຂໍ້ມູນ ກ່ຽວກັບການຊໍາລະ;
5. ດັດແປງ, ປອມແປງ ເອກະສານ ຫຼື ຂໍ້ມູນ ກ່ຽວກັບທຸລະກໍາ ແລະ ລະບົບການຊໍາລະ;
6. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;
7. ປະຕິເສດການຮ່ວມມື ໃນການກວດກາຂອງທະນາຄານແຫ່ງ ສປປ ລາວ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 49 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ໃຫ້ບໍລິການຊໍາລະເງິນ**

ຫ້າມ ຜູ້ໃຫ້ບໍລິການຊໍາລະເງິນ ມີພຶດຕິກໍາ ດັ່ງນີ້:

1. ໃຫ້ບໍລິການຊໍາລະເງິນເກີນຂອບເຂດ ທີ່ໄດ້ຮັບອະນຸຍາດ;
2. ອອກເຄື່ອງມືການຊໍາລະ ໂດຍບໍ່ໄດ້ຮັບອະນຸຍາດ;
3. ນໍາໃຊ້ເຕັກໂນໂລຊີ ທີ່ບໍ່ໄດ້ຮັບອະນຸຍາດ ເຂົ້າໃນການໃຫ້ບໍລິການຊໍາລະເງິນ;
4. ໃຫ້ບໍລິການຊໍາລະເງິນ ບໍ່ຖືກຕ້ອງກັບການເປີດເຜີຍຂໍ້ມູນ ຫຼື ການໂຄສະນາ;
5. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
6. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອໍາຂໍ້ມູນ ກ່ຽວກັບການຊໍາລະ;
7. ດັດແປງ, ປອມແປງ ເອກະສານ ຫຼື ຂໍ້ມູນ ກ່ຽວກັບທຸລະກໍາ ແລະ ການໃຫ້ບໍລິການຊໍາລະເງິນ;
8. ປະຕິເສດການຮ່ວມມື ໃນການກວດກາຂອງທະນາຄານແຫ່ງ ສປປ ລາວ, ຜູ້ຄວບຄຸມລະບົບການຊໍາລະ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
9. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;
10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 50 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການ**

ຫ້າມ ຜູ້ໃຊ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ລະບົບການຊໍາລະ ເຂົ້າໃນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
2. ໃສ່ຮ້າຍປ້າຍສີຕໍ່ຜູ້ຄວບຄຸມລະບົບການຊໍາລະ ແລະ/ຫຼື ຜູ້ໃຫ້ບໍລິການຊໍາລະເງິນ;
3. ປະຕິເສດການຮ່ວມມືໃນການກວດກາຂອງຜູ້ຄວບຄຸມລະບົບການຊໍາລະ, ຜູ້ໃຫ້ບໍລິການຊໍາລະເງິນ, ທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
4. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ໃຫ້ຜູ້ໃຫ້ບໍລິການຊໍາລະເງິນ;
5. ປັ່ນປ່ວນລະບົບການຊໍາລະ ແລະ/ຫຼື ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດໍາເນີນງານຂອງລະບົບການຊໍາລະດັ່ງກ່າວ ແລະ/ຫຼື ຜູ້ໃຊ້ບໍລິການອື່ນ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 51 (ປັບປຸງ) ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ ຫຼື ພັກພວກ ຂອງຕົນ;
3. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອຳຂໍ້ມູນ ກ່ຽວກັບລະບົບການຊຳລະ;
4. ທວງເອົາ, ຂໍເອົາ, ຮັບ ຫຼື ໃຫ້ສິນບົນ ຫຼື ສິ່ງຕອບແທນອື່ນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ V
# ການຄຸ້ມຄອງ ແລະ ການກວດກາ ວຽກງານລະບົບການຊຳລະ

## ໝວດທີ 1
## ການຄຸ້ມຄອງວຽກງານລະບົບການຊຳລະ

**ມາດຕາ 52 (ປັບປຸງ) ອົງການຄຸ້ມຄອງວຽກງານລະບົບການຊຳລະ**

ລັດຖະບານ ຄຸ້ມຄອງວຽກງານລະບົບການຊຳລະ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງວຽກງານລະບົບການຊຳລະ ທະນາຄານແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານລະບົບການຊຳລະ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານລະບົບການຊຳລະ ເປັນແຜນການ, ແຜນງານ, ໂຄງການ ແລະ ນິຕິກຳໃຕ້ກົດໝາຍ ເພື່ອຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານລະບົບການຊຳລະ;
4. ພິຈາລະນາ ອອກ, ຕໍ່ອາຍຸ, ໂຈະ ຫຼື ຖອນ ໃບອະນຸຍາດການດຳເນີນທຸລະກິດການຊຳລະ;
5. ອະນຸຍາດໃຫ້ຜູ້ໃຫ້ບໍລິການຊຳລະເງິນ ອອກບັດ ແລະ ເງິນເອເລັກໂຕຣນິກ, ສັ່ງໂຈະ ຫຼື ຢຸດເຊົາການນຳໃຊ້ເຄື່ອງມືການຊຳລະ ທີ່ບໍ່ເໝາະສົມ;
6. ກຳນົດເງື່ອນໄຂ, ຫຼັກການການດຳເນີນງານ, ມາດຕະຖານທາງດ້ານເຕັກນິກ ກ່ຽວກັບການຊຳລະ, ກົນໄກການໄລ່ລຽງ ແລະ ການຫັກບັນຊີ;
7. ວາງຫຼັກການໃນການກຳນົດຄ່າບໍລິການ ຂອງຜູ້ດຳເນີນທຸລະກິດການຊຳລະ;
8. ກຳນົດ ນະໂຍບາຍ, ຫຼັກການ ແລະ ລະບຽບການ ກ່ຽວກັບການຊຳລະຂ້າມແດນ;
9. ພັດທະນາ ແລະ ຈັດຕັ້ງປະຕິບັດ ລະບົບຕິດຕາມ ກວດກາ ການເຄື່ອນໄຫວ ຂອງຜູ້ດຳເນີນທຸລະກິດການຊຳລະ ແລະ ການພັດທະນາ ເຕັກໂນໂລຊີດ້ານການຊຳລະ;
10. ນຳໃຊ້ມາດຕະການ ຕໍ່ຜູ້ດຳເນີນທຸລະກິດການຊຳລະ ທີ່ລະເມີດກົດໝາຍ;
11. ອອກຄຳສັ່ງໃຫ້ຜູ້ໃຫ້ບໍລິການຊຳລະເງິນ ໂຈະການເຄື່ອນໄຫວບັນຊີຕາມວົງເງິນ ທີ່ໄດ້ຮັບໂອນເງິນໂດຍບໍ່ຖືກຕ້ອງຕາມກົດໝາຍ ຕາມການຮ້ອງຂໍ ຂອງຜູ້ຖືກເສຍຫາຍ ຫຼື ເຈົ້າຂອງບັນຊີທີ່ສັ່ງໂອນເງິນ;

12. ສ້າງ, ບໍາລຸງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ເພື່ອຄຸ້ມຄອງວຽກງານລະບົບການຊໍາລະ;

13. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອກໍານົດກົນໄກ, ປະເມີນ ແລະ ຕິດຕາມ ກວດກາ ອາຊະຍາກໍາທາງລະບົບຄອມພິວເຕີ;

14. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການກໍານົດທິດທາງ, ການວາງແຜນຈັດຕັ້ງປະຕິບັດ, ປະເມີນ ແລະ ຕິດຕາມ ການເຄື່ອນໄຫວຂອງລະບົບການຊໍາລະ ໃຫ້ມີປະສິດທິພາບ;

15. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານລະບົບການຊໍາລະ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 54 (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບທະນາຄານແຫ່ງ ສປປ ລາວ ໃນການຄຸ້ມຄອງວຽກງານລະບົບການຊໍາລະ ຕາມຂອບເຂດຄວາມຮັບຜິດຊອບ ແລະ ພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານລະບົບການຊໍາລະ

**ມາດຕາ 55 ອົງການກວດກາວຽກງານລະບົບການຊໍາລະ**

ອົງການກວດກາວຽກງານລະບົບການຊໍາລະ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານລະບົບການຊໍາລະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 56 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານລະບົບການຊໍາລະ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານລະບົບການຊໍາລະ;

2. ການຄວບຄຸມ, ການໃຫ້ບໍລິການ ແລະ ການນໍາໃຊ້ ລະບົບການຊໍາລະ ລວມທັງເຄື່ອງມື, ຊ່ອງທາງ ແລະ ກົນໄກ ການຊໍາລະ;

3. ລະບຽບການພາຍໃນ ກ່ຽວກັບການໃຫ້ບໍລິການ ເປັນຕົ້ນ ການເກັບຄ່າທໍານຽມ ແລະ ຄ່າບໍລິການ ຂອງຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະເງິນ;

4. ສະຖານທີ່, ອຸປະກອນ, ເຄື່ອງຈັກ, ລະບົບບັນທຶກບັນຊີ ຫຼື ເອກະສານຕ່າງໆ ກ່ຽວກັບບັນຊີ ຫຼື ທຸລະກໍາ ຂອງຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະເງິນ;

5. ສັນຍາກ່ຽວກັບການວ່າຈ້າງຜູ້ສະໜອງ ແລະ ຜູ້ໃຫ້ບໍລິການຈາກພາຍນອກ;

6. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 57 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານລະບົບການຊຳລະ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ແລະ ນອກແຜນການ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການກວດກາວຽກງານລະບົບການຊຳລະ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 58 (ປັບປຸງ) ການກວດກາການຊຳລະຂ້າມແດນ**

ທະນາຄານແຫ່ງ ສປປ ລາວ ປະສານສົມທົບກັບອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງຂອງຕ່າງປະເທດ ເພື່ອກວດກາການຊຳລະຂ້າມແດນ ດັ່ງນີ້:

1. ບໍລິສັດໃນກຸ່ມ, ສາຂາ, ໜ່ວຍບໍລິການ, ຕົວແທນ ແລະ ຫ້ອງການຜູ້ຕາງໜ້າ ຂອງຜູ້ດຳເນີນທຸລະກິດການຊຳລະຂ້າມແດນຂອງ ສປປ ລາວ ທີ່ເຄື່ອນໄຫວຢູ່ຕ່າງປະເທດ;

2. ບໍລິສັດຕ່າງປະເທດ ທີ່ມີບໍລິສັດໃນກຸ່ມ, ສາຂາ, ໜ່ວຍບໍລິການ, ຕົວແທນ ຫຼື ຫ້ອງການຜູ້ຕາງໜ້າທີ່ດຳເນີນທຸລະກິດການຊຳລະ ຢູ່ ສປປ ລາວ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 61 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 62 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ມັງກອນ 2024 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງ ລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 17 ພະຈິກ 2017.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ